**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ

ມະຫາວິທະຍາໄລສຸພານຸວົງ

ເລກທີ...120./ມສ

ຫຼວງພະບາງ, ວັນທີ 6 ພຶດສະພາ 2021

# ແຈ້ງການ

ເຖິງ : ຄະນະບໍດີ, ຫົວໜ້າຫ້ອງການ, ຜູ້ອໍານວຍການຫໍສະໝຸດ, ສູນ, ສະຖາບັນ ແລະ ນັກສຶກສາ ພາຍໃນ ມະຫາວິທະຍາໄລ ສຸພານຸວົງ.

ເລື່ອງ: ການໂຈະການຮຽນ-ການສອນຊົ່ວຄາວ.

- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 462/ຫສນຍ, ລົງວັນທີ 05 ພຶດສະພາ 2021.
- ອີງຕາມ ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ Covid-19.
- ອີງຕາມ ບົດລາຍງານຂອງຫ້ອງວ່າການປົກຄອງ ແຂວງຫຼວງພະບາງ ສະບັບເລກທີ 24/ຫວຂ.ຫຼບ, ລົງວັນທີ 05 ພຶດສະພາ 2021.

ສະພາບການລະບາດຂອງພະຍາດໂຄວິດ-19 ຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ກວມເອົາທຸກປະເທດໃນທົ່ວໂລກ, ຈໍານວນຜູ້ຕິດເຊື້ອ ແລະ ເສຍຊີວິດຈາກພະຍາດດັ່ງກ່າວຍັງສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງຢູ່ໃນປະເທດໃກ້ຄຽງຂອງພວກເຮົາ ແລະ ປັດຈຸບັນພະຍາດດັ່ງກ່າວໄດ້ມີການລະບາດຢູ່ພາຍໃນ ສປປ ລາວ ໂດຍສະເພາະນະຄອນຫຼວງວຽງຈັນ, ບໍ່ແກ້ວ, ຈໍາປາສັກ ແລະ ບັນດາແຂວງຕ່າງໆ ພາຍໃນປະເທດ. ສະນັ້ນ, ເພື່ອເປັນການສະກັດກັ້ນ ແລະ ຄວບຄຸມພະຍາດດັ່ງກ່າວບໍ່ໃຫ້ມີການແຜ່ລະບາດໃນ ມະຫາວິທະຍາໄລ ສຸພານຸວົງ.

**ອະທິການບໍດີ ມະຫາວິທະຍາໄລ ສຸພານຸວົງ ອອກແຈ້ງການ ດັ່ງນີ້:**

1. ໃຫ້ບັນດາຄະນະວິຊາໂຈະການຮຽນ-ການສອນໃນຫ້ອງຮຽນຊົ່ວຄາວແຕ່ວັນທີ **6-20 ພຶດສະພາ 2021** ຈົນກວ່າຈະມີແຈ້ງການປ່ຽນແປງຂອງລັດຖະບານ.
2. ໃນໄລຍະທີ່ມີການໂຈະການຮຽນ-ສອນຊົ່ວຄາວ (ການຂຶ້ນຫ້ອງສິດສອນແບບປົກກະຕິ) ແລະ ເພື່ອເຮັດໃຫ້ການສິດສອນຂອງຄູ-ອາຈານມີລັກສະນະຕໍ່ເນື່ອງ: (1) ໃຫ້ຄູ-ອາຈານສືບຕໍ່ຈັດການຮຽນ-ສອນຂອງຕົນ

ໃຫ້ແກ່ນັກສຶກສາແຕ່ລະຊັ້ນຮຽນ ໂດຍນໍາໃຊ້ຮູບແບບການສິດສອນຜ່ານທາງສື່ອອນລາຍຕ່າງໆເຊັ່ນ: Whatsapp, Facebook Live, Google Classroom, OBS ຫຼື ແພຼດຟອມອື່ນໆ.... ແລະ ໃຫ້ວຽກບ້ານຕາມເງື່ອນໄຂຂອງຄະນະວິຊາຢ່າງມີຄວາມເໝາະສົມແກ່ນັກສຶກສາ, (2) ຄະນະຮັບຜິດຊອບຈັດການຮຽນ-ການສອນຂັ້ນຄະນະວິຊາ ແລະ ຂັ້ນ ມສ ສືບຕໍ່ປະສານສົມທົບກັນເພື່ອຕິດຕາມການສິດສອນຂອງຄູ-ອາຈານທີ່ສິດສອນໃນຊ່ວງໄລຍະນີ້.

3. ໃຫ້ພະນັກງານ-ອາຈານພາຍໃນຄະນະວິຊາ, ຫ້ອງການ, ສູນ, ສະຖາບັນ ແລະ ຫໍສະໝຸດຈັດຕາຕະລາງຜັດປ່ຽນກັນມາປະຈໍາການ ໂດຍໃຫ້ສົ່ງຕາຕະລາງເວນຍາມ ແລະ ປະຈໍາການໃຫ້ແກ່ຫ້ອງການບໍລິຫານ-ສັງລວມເພື່ອຄວາມສະດວກໃນການການປະສານວຽກງານໃນກໍລະນີສຸກເສີນ. (ສໍາລັບຜູ້ທີ່ບໍ່ໄດ້ມາປະຈໍາການແມ່ນໃຫ້ເຮັດວຽກຢູ່ເຮືອນທາງອອນໄລ).

4. ຫ້າມບໍ່ໃຫ້ນັກສຶກສາທີ່ນອນພາຍໃນຫໍພັກທັງ 2 ວິທະຍາເຂດອອກໄປເຄື່ອນໄຫວ ຫຼື ໄປພາລະກິດຂ້າງນອກກ່ອນໄດ້ຮັບອະນຸຍາດ, ຖ້າມີຄວາມຈໍາເປັນຕ້ອງໄດ້ຮັບການອະນຸຍາດຈາກຫ້ອງການຄຸ້ມຄອງນັກສຶກສາ ຫຼື ພະແນກຄຸ້ມຄອງນັກສຶກສາທີ່ຂຶ້ນກັບເສຍກ່ອນຈຶ່ງສາມາດອອກໄປໄດ້ ແລະ ພາຍຫຼັງກັບເຂົ້າມາຫໍພັກໃຫ້ຫ້ອງການຄຸ້ມຄອງນັກສຶກສາ ຫຼື ພະແນກຄຸ້ມຄອງນັກສຶກສາຕ້ອງວັດແທກອຸນຫະພູມກ່ອນຈຶ່ງສາມາດເຂົ້າຫໍພັກໄດ້.

5. ຫ້າມບໍ່ໃຫ້ພະນັກງານ-ອາຈານ ແລະ ນັກສຶກສາໂຮມຊຸມນຸມກັນເກີນ 20 ຄົນ ແລະ ຮັກສາໄລຍະຫ່າງ.

6. ມອບໃຫ້ພະແນກປ້ອງກັນ ມສ ຈຶ່ງຈັດຕັ້ງເວນຍາມການເຂົ້າ-ອອກ ມສ ຢ່າງເຄັ່ງຄັດ.

7. ມອບໃຫ້ໜ່ວຍງານແພດ ມສ ຈັດຕັ້ງຈຸດວັດແທກອຸນຫະພູມໃຫ້ແກ່ພະນັກງານ-ອາຈານ ແລະ ນັກສຶກສາໃນການເຂົ້າ-ອອກ ມສ ຢ່າງເຄັ່ງຄັດ.

8. ໃຫ້ພະນັກງານ-ອາຈານ ແລະ ນັກສຶກສາທີ່ມະຫາວິທະຍາໄລ ສຸພານຸວົງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຈາມແຈ້ງການສະບັບນີ້ຢ່າງເຂັ້ມງວດຈົນກວ່າຈະມີແຈ້ງການປ່ຽນແປງຂອງຂັ້ນເທິງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ອະທິການບໍດີ**

ບ່ອນສົ່ງ:

- ຄະນະອະທິການບໍດີ 5 ສະບັບ
- ຄະນະວິຊາ,ຫ້ອງການ,ສູນ,ສະຖາບັນລະ 1 ສະບັບ
- ເກັບມ້ຽນ 1 ສະບັບ

ຮສ. ປທ. ວິໄຊ ຈັນສະຫວ່າງ